ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 3253/ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ 19/10/2023

ໃບລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,
ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ,

ເລື່ອງ: ແຈ້ງມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 2 ປະຈຳປີ 2023

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 27/ຄຄຊ, ລົງ ວັນທີ 29 ມີນາ 2022.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິ ຂອງກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 2 ປະຈຳປີ 2023 ວັນທີ 19 ຕຸລາ 2023, ດັ່ງມີລາຍລະອຽດລຸ່ມນີ້:

ວາລະທີ 1. ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022, ປະຊຸມເມື່ອວັນທີ 25 ເມສາ 2023. ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງ ຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.556.703.350 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 2. ຮັບຮອງການແຕ່ງຕັ້ງຜູ້ອຳນວຍການໃຫຍ່ຜູ້ໃໝ່ ເພື່ອປ່ຽນແທນທ່ານຣັກສາການຜູ້ອຳນວຍການໃຫຍ່ຜູ້ເກົ່າ. ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງ ຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.556.703.350 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 3. ຮັບຮອງການແຕ່ງຕັ້ງກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າ, ການກຳນົດຜູ້ມີອຳນາດໃນການລົງລາຍເຊັນຜູກພັນບໍລິສັດ ແລະ ອາຍຸການຂອງກຳມະການສະພາບໍລິຫານບໍລິສັດ. ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.556.703.350 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 4. ຮັບຮອງການດັດແກ້ກົດລະບຽບຂອງບໍລິສັດມາດຕາ 9 ວ່າດ້ວຍກຳມະການສະພາບໍລິຫານ. ໂດຍປ່ຽນຊື່ ແລະ ຂໍ້ມູນຂອງກຳມະການສະພາບໍລິຫານຜູ້ໃໝ່ຄື:

- ຊື່ ແລະ ນາມສະກຸນ: ທ່ານ ວົງສະກຸນ ຍົ່ງຍົ່ງ
- ສັນຊາດ: ລາວ;
- ທີ່ຢູ່ປັດຈຸບັນ: ບ້ານ ນາເລົ່າ, ໜ່ວຍ 31, ເມືອງ ສີໂຄດຕະບອງ, ແຂວງ ນະຄອນຫຼວງວຽງຈັນ.

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນເລື່ອງດັ່ງກ່າວຂ້າງເທິງ ລວມທັງມີອຳນາດດັດແກ້ເນື້ອໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼື ຄຳສັ່ງໃຫ້ດັດແກ້.

ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນຫລາຍກວ່າ 80 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ, ດັ່ງນີ້:

(ກ) ຈຳນວນຄົນຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີ 81 ຄົນ ເທົ່າກັບ 100 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

(ຂ) ຈຳນວນຮຸ້ນ (ສຽງ) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີ 1.556.703.350 ຮຸ້ນ (ສຽງ), ເທົ່າກັບ 92,699334 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ຮຽນມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ,
ປະທານສະພາບໍລິຫານ

ສຸລິວັດ ສຸວັນນະຈຸມຄຳ